*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 75-80*
https://doi.org/10.69692/SUJMRD12(Fast track)*75*

# An Analysis of Factors Affecting the Decision to Study in Luang Prabang Teacher Training College

**Deuan XAIYALATH[1], Timnoy SALITXAY[2], Toulakone SOULIYA[3]**

*Resource Management Program in Organizational Resources Management, Souphanouvong University, Lao PDR*

[1*] *Correspondence:* Deuan XAIYALATH, *Resource Management Program in Organizational Resources Management, Souphanouvong University Tel: +856 20 59471266*
*E-mail:* deuan17818@gmail.com

***Article Info:***
***Submitted: March 02, 2026***
***Revised: March 20, 2026***
***Accepted: March 31, 2026***

**Abstract**

This research aims to analyze the factors affecting students' decision-making regarding further education at Luang Prabang Teacher Training College. The sample consisted of 290 students. Data were collected using a 5-point Likert scale questionnaire and analyzed using descriptive statistics, including Mean and Standard Deviation. Inferential statistics, specifically Multiple Regression Analysis, were employed to test the hypotheses.

The research findings revealed that the seven independent factors collectively predicted students' decision to pursue education at Luang Prabang Teacher Training College with statistical significance at the 0.05 level ($R = 0.694$). These factors together explained 48.10% of the variance in students' decision-making ($R^2 = 0.481$).

When considering individual factors, two variables significantly influenced the decision at the 0.01 level: Personal Reasons ($X_1$) and Future Opportunities ($X_7$), which demonstrated the highest predictive power. Hypothesis testing confirmed that both factors have a significant positive impact on decision-making. Conversely, Institutional Environment/Quality ($X_2$), Financial Factors ($X_3$), Curriculum ($X_4$), Family Factors ($X_5$) and Social Factors ($X_6$) did not significantly affect the decision-making process at the 0.01 level.

**Keywords:** Analysis, factors affecting, Luang Prabang Teacher Training College

## 1. ພາກສະເໜີ

ການສຶກສາແມ່ນພື້ນຖານສຳຄັນທີ່ສຸດໃນການພັດທະນາສັງຄົມ ເພື່ອໃຫ້ຄົນທີ່ເປັນສະມາຊິກຂອງສັງຄົມຈະເປັນຄົນທີ່ມີຄຸນນະພາບ ແລະ ຄຸນນະທຳ ນັ້ນແມ່ນການສຶກສາຈະຊ່ວຍສ້າງຈິດສຳນຶກຂອງການເປັນມະນຸດ, ມີຈິດວິນຍານຂອງຜູ້ທີ່ມີອາລະຍະທຳທາງປັນຍາ ແລະ ຄວາມງົດງາມທາງດ້ານຈິດໃຈ. ການສຶກສາສ້າງຄົນໃຫ້ມີຄວາມຮູ້ໃນການດຳລົງຊີວິດ, ການປະກອບອາຊີບ, ມີຄວາມອົດທົນໃນການຕໍ່ສູ້ກັບອຸປະສັກຂອງຊີວິດ (Phommalangsy et al., 2024).

ການສຶກສາເປັນຫົວໃຈສຳຄັນຂອງການພັດທະນາຊັບພະຍາກອນມະນຸດ ເຊິ່ງເປັນຊັບພະຍາກອນທີ່ສຳຄັນຂອງສັງຄົມໃຫ້ມີຄຸນນະພາບ, ສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ຢ່າງເປັນສຸກ, ທັນຕໍ່ການປ່ຽນແປງທີ່ເກີດຂຶ້ນຕາມ ຍຸກສະໄໝໂດຍສະເພາະໃນຍຸກປັດຈຸບັນມີການປ່ຽນແປງຢ່າງໄວວາ, ຄາດການລ່ວງໜ້າບໍ່ໄດ້ ເຊິ່ງຕ້ອງປັບປ່ຽນໃຫ້ທັນ ແລະ ສອດຄ່ອງກະແສການປ່ຽນແປງຂອງຊາດ ແລະ ສັງຄົມ ຢູ່ຕະຫຼອດເວລາ ໂດຍສະເພາະ ສະຖາບັນການ ສຶກສາ ລະດັບມະຫາວິທະຍາໄລ ທີ່ມີຈຸດມຸ່ງໝາຍ ເພື່ອພັດທະນາບຸກຄົນໃຫ້ມີຄວາມຮູ້, ຄວາມສາມາດ, ມີຄວາມພ້ອມໃນທຸກດ້ານບໍ່ວ່າຈະເປັນຄວາມພ້ອມທາງດ້ານຄຸນລັກສະນະ, ບຸກຄະລິກກະພາບ, ຄຸນນະທຳ, ຈະລິຍະທຳ ແລະ ຄວາມສາມາດດ້ານວິຊາຊີບ ທີ່ຈະນຳໄປເປັນເຄື່ອງມືປະກອບອາຊີບໃນອານາຄົດອັນຈະສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ ລວມທັງເຮັດວຽກຮ່ວມກັບຄົນອື່ນໄດ້ຢ່າງມີປະສິດທິພາບ, ໃຫ້ມີຄ່ານິຍົມ ແລະ ການປະພຶດຕາມບັນທັດຖານຂອງສັງຄົມ (ກະຊວງສຶກສາທິການ ແລະ ກິລາ, 2016). ການພັດທະນາຄົນໃນດ້ານຄຸນນະພາບຕ້ອງຄຳນຶງເຖິງການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈ ຄວບຄູ່ກັນໄປໂດຍສະເພາະຜູ້ທີ່ກຳລັງສຶກສາຮ່ຳຮຽນໃນລະດັບມະຫາວິທະຍາໄລ ເຊິ່ງໃນລະບົບການຈັດການຮຽນ-ການສອນໃນລະດັບມະຫາວິທະຍາໄລ ມີຄວາມກ່ຽວຂ້ອງຕັ້ງແຕ່ຂະບວນການຮັບບຸກຄົນມີຄຸນສົມບັດເໝາະກັບສາຂາວິຊາ, ຂະບວນການພັດທະນາໃຫ້ນັກສຶກສາມີຄຸນລັກສະນະ ແລະ ຄວາມສາມາດເປັນໄປຕາມປັດຊະຍາ ຂອງສະຖາບັນ, ຂະບວນການພັດທະນານັກສຶກສາໃຫ້ມີຄຸນນະພາບເປັນໄປຕາມເປົ້າໝາຍຂອງສະຖາ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ບັນ ນັ້ນຈຳເປັນຕ້ອງມີລະບົບ ຫຼື ປັດໄຈສະໜັບສະໜູນ ທີ່ຈະຊ່ວຍໃຫ້ນັກສຶກສາໄດ້ຮັບການພັດທະນາໄປສູ່ຈຸດມຸ່ງໝາຍຕາມສະຖາບັນຕ້ອງການໄດ້ຢ່າງມີປະສິດທິພາບ, ລະບົບ ຫຼື ປັດໃຈສະໜັບສະໜູນດັ່ງກ່າວ ປະກອບດ້ວຍ: ລະບົບ, ຫຼັກສູດ, ລະບົບການຮຽນ-ການສອນ, ລະບົບກິດຈະກຳນັກສຶກສາ, ລະບົບການປະເມີນພາຍໃນ ແລະ ນອກຈາກນັ້ນການສຶກສາ ຍັງມີບົດບາດສຳຄັນ ຕໍ່ການພັດທະນາຄຸນນະພາບຊີວິດການເປັນຢູ່, ການພັດທະນາເສດຖະກິດ-ສັງຄົມ ແລະ ການເມືອງ. ນອກເໜືອຈາກນີ້ ການສຶກສາຍັງຊ່ວຍສ້າງຄົນໃຫ້ເປັນພົນລະເມືອງທີ່ດີມີວິໄນມີຄຸນນະທຳ ແລະ ຍັງຈະຊ່ວຍໃນການສ້າງກຳລັງຄົນໃຫ້ມີຄວາມຮູ້ຄວາມສາມາດເໝາະສົມກັບວຽກງານໃນສາຂາຕ່າງໆປະເທດຊາດຈະເລີນກ້າວໜ້າກໍ່ລ້ອນແລ້ວແຕ່ຂຶ້ນຢູ່ກັບຄຸນນະພາບຂອງຊັບພະຍາກອນມະນຸດ ເຊິ່ງເປັນຜົນຜະລິດຈາກສະຖາບັນການສຶກສາ (ກົມການສຶກສາຊັ້ນສູງ, 2020)

ການສຶກສາຖືເປັນສ່ວນໜຶ່ງໃນການພັດທະນາຊັບພະຍາກອນມະນຸດຂອງການດຳເນີນຊີວິດມະນຸດປະຊາຊົນສ່ວນໃຫຍ່ໃຫ້ຄວາມສຳຄັນ ແລະ ໃຫ້ຄວາມສົນໃຈໃນການສຶກສາເປັນຢ່າງຫຼາຍທັງໝົດເຖິງລັດຖະບານ ໄດ້ມີການສົ່ງເສີມ ແລະ ສະໜັບສະໜູນໃຫ້ປະຊາຊົນທຸກຄົນຫັນມາໃສ່ໃຈ ໃນເລື່ອງນີ້ເພາະຖືເປັນພື້ນຖານແຫ່ງຄວາມສຳເລັດໃນຊີວິດ ແລະ ສາມາດນຳ ມາໃຊ້ໃນການປະກອບອາຊີບເພື່ອລ້ຽງດູຕົນເອງ ແລະ ຄອບຄົວ. ຊັບພະຍາກອນມະນຸດນັບເປັນປັດໄຈສຳຄັນທີ່ສຸດໃນການພັດທະນາໜ່ວຍງານ ຫຼື ອົງກອນ ຕະຫລອດຈົນການພັດທະນາປະເທດຊາດ ແລະ ລະດັບໂລກຢ່າງບໍ່ມີທີ່ຈົບ ໃນການພັດທະນາດັ່ງກ່າວລ້ວນແລ້ວແຕ່ຕ້ອງໃຊ້ຊັບພະຍາກອນມະນຸດ ໃນການຂັບເຄື່ອນ ແລະ ສິ່ງທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດນັ້ນ ກໍ່ຄືການສຶກສາ (Arnolds et al., 2009). ເມື່ອການສຶກສາຄື ສິ່ງສຳຄັນໃນການພັດທະນາປະເທດຊາດ ມະນຸດຈຶ່ງຕ້ອງພະຍາຍາມຫາຄວາມຮູ້ເພື່ອນຳໄປໃຊ້ໃນການປະກອບອາຊີບເພີ່ມຫລາຍຂຶ້ນ ນອກຈາກນີ້ ການສຶກສາ ຍັງສາມາດເປັນຕົວກຳນົດທິດທາງຂອງປະເທດ ເພາະຫາກ ປະເທດຊາດໃດມີການສົ່ງເສີມການສຶກສາທີ່ຖືກຕາມທິດທາງ ຕະຫລອດ ຈົນວາງແຜນການຜະລິດຊັບພະຍາກອນມະນຸດທີ່ມີປະສິດທິພາບຈຶ່ງເຮັດໃຫ້ປະເທດນັ້ນມີຕົ້ນທຶນທີ່ເປັນຊັບພະຍາກອນມະນຸດທີ່ມີຄຸນພາບໃນການຮ່ວມກັນພັດທະນາປະເທດຊາດໃຫ້ກ້າວໄກ ທັງໝົດໄປເຖິງໜ່ວຍຍ່ອຍລະດັບອົງກອນ ຫາກຄັດເລືອກຊັບພະຍາກອນມະນຸດທີ່ມີຄຸນນະພາບເຂົ້າມາ ເຮັດວຽກງານ ຈຶ່ງເຮັດໃຫ້ອົງກອນພັດທະນາໄດ້ຢ່າງກ້າວໄກ (Thongchuea & Tummaek, 2017) ການສຶກສາເປັນຂະບວນການ ໜຶ່ງທີ່ມີຄວາມສຳ ຄັນຕໍ່ການດຳລົງຊີວິດຂອງມະນຸດເປັນການສຶກສາຄວາມຮູ້ທີ່ສືບທອດກັນ ມາເພື່ອເຮັດໃຫ້ມະນຸດມີການພັດທະນາທັງດ້ານຮ່າງກາຍ, ຈິດໃຈ ແລະ ສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ການສຶກສານັ້ນບໍ່ໄດ້ຈຳກັດຢູ່ພຽງການຮຽນຮູ້ໃນຫ້ອງຮຽນ ຫຼື ການອ່ານໜັງສືເທົ່ານັ້ນ ແຕ່ທັງໝົດເຖິງການ ຮຽນຮູ້ຜ່ານການກະທຳ, ການໃຊ້ຊີວິດປະຈຳວັນ ຫຼື ການພົບເຫັນ ເຫດການຕ່າງໆ ອີກຢ່າງການສຶກສາເປັນຂະບວນການທີ່ເກີດຂຶ້ນຕະຫລອດ ຊີວິດຕັ້ງແຕ່ເກີດຈົນເຖິງສິ້ນອາຍຸໄຂ (Sangsee, 2005) ຫລັງຈາກ ມະນຸດໄດ້ຮັບການສຶກສາແລ້ວກໍ່ຕ້ອງນຳໄປປັບໃຊ້ໃຫ້ຖືກຕ້ອງເໝາະສົມ ກັບການປ່ຽນແປງຂອງສັງຄົມ, ສິ່ງແວດລ້ອມ, ເສດຖະກິດ, ການເມືອງ ແລະ ເທັກໂນໂລຊີເພື່ອໃຫ້ເກີດການພັດທະນາຕົນເອງ, ອາຊີບ, ສັງຄົມ ແລະ ປະເທດ.

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນແນໃສ່ພັດທະນາລະບົບການສຶກ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ , ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີ ຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ (ກະຊວງສຶກສາທິການ ແລະ ກິລາ, 2021).

ວິທະຍາໄລຄູຫຼວງພະບາງມີວິໄສທັດຮອດປີ 2030 ແມ່ນເນັ້ນໃສ່ພັດທະນາຊັບພະຍາກອນມະນຸດໃຫ້ເປັນກຳລັງການຜະລິດຕົ້ນຕໍທີ່ສາມາດຕອບສະໜອງຕໍ່ການພັດທະນາເສດຖະກິດ-ສັງຄົມຢ່າງຍືນຍົງຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້ທັງປະລິມານ ແລະ ຄຸນນະພາບ, ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການທາງສັງຄົມຢ່າງທົ່ວເຖິງ ແລະ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ

ເວົ້າລວມ ເວົ້າສະເພາະໃນການຮັບເອົານັກສຶກສາມາສຶກສາຕໍ່ໂດຍສະເພາະແມ່ນຄູທີ່ມາຍົກລະດັບ ກໍຄືນັກສຶກສາຄູພາກພັກສິ້ນປີຮຽນທີ່ເຂົ້າມາສຶກສາໃນສາຍຄູປະຖົມຊັ້ນສູງ ຕັ້ງແຕ່ປີ 2020-2024 ແມ່ນມີຈຳນວນທັງໝົດ 307 ຄົນ, ຍິງ 139 ຄົນຄື: ສົກຮຽນ 2020-2021 ມີຈຳນວນ 37 ຄົນ, ຍິງ 13 ຄົນ, ສົກຮຽນ 2021-2022 ມີຈຳນວນ 63 ຄົນ, ຍິງ 29 ຄົນ, ສົກຮຽນ 2022-2023 ມີຈຳນວນ 160 ຄົນ, ຍິງ 75 ຄົນ, ສົກຮຽນ 2023-2024 ມີຈຳນວນ 47 ຄົນ, ຍິງ 22 ຄົນ, ສົກຮຽນ 2024-2025 ມີຈຳນວນ 45 ຄົນ, ຍິງ 20 ຄົນ ເມື່ອທຽບກັບສົກຮຽນ 2023-2024 ແມ່ນຈຳນວນນັກສຶກສາຫຼຸດລົງຈຳນວນ 59 ຄົນ ເຊິ່ງກວມເອົາ 43,8 %  (ກະຊວງສຶກສາທິການ ແລະ ກິລາ, 2020-2024) ແຕ່ມາຮອດປັດຈຸບັນນີ້ເຫັນວ່າຈຳນວນນັກສຶກສາຫຼຸດລົງ ແລະ ປະລະໄປແຕ່ລະສົກຮຽນ ເນື່ອງມາຈາກຫຼາຍສາເຫດເປັນຕົ້ນແມ່ນສະພາບເສດຖະກິດຄອບຄົວ, ສິ່ງແວດລ້ອມ, ສິ່ງເອື້ອອຳນວຍຄວາມສະດວກ, ການເດີນທາງ, ສະຖານທີ່ພັກເຊົາ, ຫຼັກສູດ ແລະ ການໃຊ້ຈ່າຍໃນຊ່ວງໄລຍະການຮຽນຕໍ່ເນື່ອງ, ເວລາຮຽນ.

ຈາກຄວາມສຳຄັນ ແລະ ບັນຫາທີ່ກ່ຽວມາຂ້າງເທິງນັ້ນຜູ້ຄົ້ນຄວ້າຈຶ່ງມີຈຸດປະສົງເພື່ອວິເຄາະປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືໃນການເກັບລວບລວມຂໍ້ມູນໂດຍໃຊ້ແບບສອບຖາມເຊິ່ງປະກອບດ້ວຍ 3 ພາກສ່ວນ ໂດຍມີລາຍລະອຽດດັ່ງນີ້:

ພາກສ່ວນທີ 1 ຂໍ້ມູນປັດໄຈສ່ວນບຸກຄົນຂອງຜູ້ຕອບແບບສອບຖາມ ເປັນແບບສອບຖາມແບບປາຍເປີດ ແລະ ແບບສອບຖາມແບບປາຍປິດ ແບບມີຫຼາຍຕົວເລືອກ ປະກອບມີ ເພດ, ອາຍຸ, ສະຖານະພາບ, ອາຊີບ, ລາຍໄດ້ສະເລ່ຍຕໍ່ເດືອນຂອງທ່ານ, ແຂວງທີ່ອາໄສຢູ່ຂອງຜູ້ຕອບແບບສອບຖາມ.

ພາກສ່ວນທີ 2 ຂໍ້ມູນກ່ຽວກັບປັດໄຈແຕ່ລະດ້ານທີ່ສົ່ງຜົນຕໍ່ການຕັດສິນໃຈໃນການເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງປະກອບມີຄື ດ້ານເຫດຜົນສ່ວນຕົວ, ປັດໄຈດ້ານສະພາບແວດລ້ອມ/ຄຸນນະພາບຂອງສະຖາບັນ, ປັດໄຈດ້ານການເງິນ, ປັດໄຈດ້ານຫຼັກສູດ,

ປັດໄຈດ້ານຄອບຄົວ, ປັດໄຈທາງດ້ານສັງຄົມ, ປັດໄຈດ້ານໂອກາດໃນອະນາຄົດ.

ສຳລັບແບບສອບຖາມໃນສ່ວນທີ 2 ມີລັກສະນະຂໍ້ຄວາມຄຳຖາມມາດຖານການວັດຂອງ ລີເຄີຣທ (Likert scale) ໄດ້ກຳນົດເກນການໃຫ້ຄະແນນການວັດຄວາມຄິດເຫັນເປັນ 5 ລະດັບຄື ຫຼາຍທີ່ສຸດ, ຫຼາຍ, ປານກາງ, ໜ້ອຍ, ໜ້ອຍທີ່ສຸດ ໂດຍມີການກຳນົດຄະແນນ ຄຳຕອບຂອງແບບສອບຖາມດັ່ງນີ້ (ບຸນໃຈ ສີສະຖິດນາກູນ, 2555: 283)

5 ຄະແນນ ໝາຍເຖິງ ເປັນປັດໄຈທີ່ສົ່ງຜົນ ຫຼາຍທີ່ສຸດ

4 ຄະແນນ ໝາຍເຖິງ ເປັນປັດໄຈທີ່ສົ່ງຜົນ ຫຼາຍ

3 ຄະແນນ ໝາຍເຖິງ ເປັນປັດໄຈທີ່ສົ່ງຜົນ ປານກາງ

2 ຄະແນນ ໝາຍເຖິງ ເປັນປັດໄຈທີ່ສົ່ງຜົນ ໜ້ອຍ

1 ຄະແນນ ໝາຍເຖິງ ເປັນປັດໄຈທີ່ສົ່ງຜົນ ໜ້ອຍທີ່ສຸດ

ການກຳນົດລະດັບຄວາມຄວາມສຳຄັນເພື່ອແປຄວາມໝາຍຄ່າສະເລ່ຍ ໄວ້ 5 ລະດັບ ຈາກການຄຳນວນລະດັບຄ່າສະເລ່ຍ (ບຸນໃຈ ສີສະຖິດນາກູນ, 2555: 283) ດັ່ງນີ້:

$$\text{ລະດັບຄ່າສະເລ່ຍ} = \frac{\text{ຄະແນນສູງສຸດ} - \text{ຄະແນນຕ່ຳສຸດ}}{\text{ຈຳນວນທັງໝົດ}}$$

$$= \frac{5-1}{5}$$

$$= 0.8$$

ຈາກການຄຳນວນດັ່ງກ່າວ ນຳມາກຳນົດເກນໃນການວັດລະດັບຄວາມຄິດເຫັນດັ່ງນີ້:

ຄ່າສະເລ່ຍ 4.21-5.00 ໝາຍເຖິງ ລະດັບຄວາມສຳຄັນ ທີ່ສຸດ

ຄ່າສະເລ່ຍ 3.41-4.20 ໝາຍເຖິງ ລະດັບຄວາມສຳຄັນ ຫຼາຍ

ຄ່າສະເລ່ຍ 2.61-3.40 ໝາຍເຖິງ ລະດັບຄວາມສຳຄັນ ປານກາງ

ຄ່າສະເລ່ຍ 1.81-2.61 ໝາຍເຖິງ ລະດັບຄວາມສຳຄັນ ໜ້ອຍ

ຄ່າສະເລ່ຍ 1.00-1.80 ໝາຍເຖິງ ລະດັບຄວາມສຳຄັນ ໜ້ອຍທີ່ສຸດ

ການແປຄວາມໝາຍຂອງຄ່າຜັນປ່ຽນມາດຕະຖານ (ຊູສີ ວົງລັດຕະນະ, 2001)

ຄ່າຜັນປ່ຽນມາດຕະຖານ 0.000-0.999 ໝາຍເຖິງ ມີການກະຈາຍຂອງຂໍ້ມູນບໍ່ແຕກຕ່າງກັນຫຼາຍ

ຄ່າຜັນປ່ຽນມາດຕະຖານ 1.000 ຂຶ້ນໄປ ໝາຍເຖິງ ມີການກະຈາຍຂອງຂໍ້ມູນແຕກຕ່າງກັນຫຼາຍ

ສ່ວນທີ 3 ຂໍ້ສະເໜີແນະອື່ນໆ

* ການຫາຄຸນນະພາບຂອງແບບສອບຖາມ

1) ການຫາຄ່າຄວາມສອດຄ່ອງຕາມເນື້ອໃນຂອງແບບສອບຖາມ (Content Validity) ພາຍຫຼັງທີ່ຜູ້ຄົ້ນຄວ້າໄດ້ອອກແບບສອບຖາມສຳເລັດແລ້ວ ແມ່ນໄດ້ສົ່ງໄປໃຫ້ຜູ້ຊ່ຽວຊານສະເພາະດ້ານຈຳນວນ 3 ທ່ານ ເພື່ອພິຈາລະນາຄວາມຖືກຕ້ອງໃຫ້ກົງຕາມເນື້ອໃນ ແລະ ກ່ຽວຂ້ອງກັບຈຸດປະສົງຂອງການສຶກສາ, ໂດຍໃຊ້ວິທີການຫາຄ່າ IOC ຂອງ Srisa-ard (2002) ເຊິ່ງມີເກນໃນການພິຈາລະນາຄ່າ IOC ຕັ້ງແຕ່ 0.50 ຂຶ້ນໄປ ຖືວ່າເໝາະສົມ ສາມາດນຳໄປໃຊ້ໄດ້ ເຊິ່ງກວດກາຄວາມສອດຄ່ອງ ໂດຍໃຫ້ຄະແນນ (-0) ຖ້າຫາກເຫັນວ່າຄຳຖາມນັ້ນບໍ່ມີຄວາມສອດຄ່ອງ; ໃຫ້ຄະແນນ (0) ຖ້າຫາກບໍ່ແນ່ໃຈວ່າ ຄຳຖາມນັ້ນສອດຄ່ອງ ຫຼື ບໍ່ ສອດຄ່ອງ; ໃຫ້ແນນ (1) ຖ້າຫາກເຫັນວ່າຄຳຖາມນັ້ນສອດຄ່ອງທີ່ສຸດ. ຜົນການທົດສອບ ໄດ້ຄ່າສຳປະສິດຄວາມສອດຄ່ອງທັງໝົດ ຂອງຄຳຖາມທຸກຂໍ້ ເທົ່າກັບ 0.75 ເຊິ່ງສູງກວ່າເກນທີ່ກຳນົດໄວ້ ສະແດງວ່າແບບສອບຖາມມີຄວາມສອດຄ່ອງສາມາດນຳໄປໃຊ້ເປັນເຄື່ອງມືໃນການລວບລວມຂໍ້ມູນຕໍ່ໄປໄດ້.

2) ການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມ (Reliability) ຜູ້ສຶກສາໄດ້ສ້າງແບບສອບຖາມ ແລ້ວນຳໄປສະເໜີຕໍ່ອາຈານນຳພາ ແລະ ຜູ້ຊ່ຽວຊານ ແລ້ວນຳໄປທົດສອບກັບນັກສຶກສາຈຳນວນ 30 ຄົນ ເຊິ່ງບໍ່ແມ່ນກຸ່ມເປົ້າ ໝາຍ ແລ້ວນຳຂໍ້ມູນທີ່ໄດ້ມາວິເຄາະຫາ ຄ່າຄວາມເຊື່ອໝັ້ນຂອງເຄື່ອງມື ໂດຍໃຊ້ວິທີການຫາຄ່າສຳປະສິດອານຟາ (Cronbach's Alpha Coefficient: α) ຂອງ Taveerat (1997) ເຊິ່ງມີ ເກນ 0.80 ຂຶ້ນໄປ ສະແດງວ່າແບບສອບຖາມມີຄວາມເຊື່ອໝ້າຖື ສາມາດນຳໄປໃຊ້ເປັນເຄື່ອງມືໃນການລວບລວມຂໍ້ມູນຕໍ່ໄປໄດ້ ຜົນການທົດສອບ ໄດ້ຄ່າສຳປະສິດຄວາມເຊື່ອໝັ້ນຂອງຄຳຖາມທຸກຂໍ້ ເທົ່າກັບ 0.94 ເຊິ່ງ ສູງ ກວ່າເກນທີ່ກຳນົດໄວ້ ສະແດງວ່າ ແບບສອບຖາມ ສາມາດນຳໄປໃຊ້ເປັນ ເຄື່ອງມືໃນການລວບລວມຂໍ້ມູນຕໍ່ໄປໄດ້.

2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາໃນຄັ້ງນີ້ແມ່ນນັກສຶກສາທີ່ກຳລັງສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງທັງໝົດ ໃນສົກຮຽນ 2024-2025 ເຊິ່ງມີຈຳນວນນັກຮຽນທັງໝົດ 1062 ຄົນ, ດັ່ງນັ້ນ, ການເລືອກຂະໜາດຂອງກຸ່ມຢ່າງ ແມ່ນອີງຕາມສູດຄິດໄບລ່ຂອງ Yamane (1967) ດັ່ງນີ້:

$$n = \frac{N}{1+Ne^2}$$

n = ຂະໜາດຂອງກຸ່ມຕົວຢ່າງ

**N** = ຂະໜາດຂອງປະຊາກອນ

**e** = ຄ່າຄວາມຄາດເຄື່ອນທີ່ຍອມຮັບໄດ້

ແທນຄ່າຕາມສູດໄດ້ຂະໜາດຂອງກຸ່ມຕົວຢ່າງ ດັ່ງນີ້:

$$n = \frac{1062}{1+1062.(0.05)^2} = 290 \text{ ຄົນ}$$

ສະນັ້ນ, ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າແມ່ນ ນັກສຶກສາຈຳນວນ 290 ຄົນ.

2.3 ວິທີການເກັບກຳຂໍ້ມູນ

ການລວບລວມຂໍ້ມູນ ຜູ້ສຶກສາໄດ້ມີການລົງເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມໃຫ້ນັກສຶກສາເປັນຜູ້ຕອບ ເຊິ່ງລວມທັງມີຕອບແບບເຊິ່ງໜ້າ ແລະ ອອນລາຍ ພາຍຫຼັງທີ່ຕອບແບບສອບຖາມແລ້ວ ກໍນຳເອົາຂໍ້ມູນມາປ້ອນໃສ່ໂປແກຣມ spss ເພື່ອວິເຄາະຂໍ້ມູນ

1) ຂໍ້ມູນປະຖົມພູມ (Primary Data)

ແມ່ນຂໍ້ມູນທີ່ຈະໄດ້ຈາກແບບສອບຖາມໃນການລວບລວມຂໍ້ມູນຄວາມຄິດເຫັນຈາກຕົວປ່ຽນຄື ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ, ເຊິ່ງປະກອບດ້ວຍຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ແບບສອບຖາມກ່ຽວກັບປັດໄຈທີ່ມີຜົນຕໍ່ການຕັດສິນໃຈ, ກຸ່ມຕົວຢ່າງ ຈຳນວນ 290 ຄົນ

2) ຂໍ້ມູນທຸຕິຍະພູມ (secondary data)

ເປັນຂໍ້ມູນທີ່ເປັນທິດສະດີ, ບົດວິທະຍານິພົນ, ເອກະສານທາງວິຊາການ, ບົດຄວາມບົດຄົ້ນຄວ້າ, ນິຕິກຳທີ່ກ່ຽວຂ້ອງ ແລະ ຂໍ້ມູນທີ່ເຜີຍແຜ່ຜ່ານສື່ທາງອິນເຕີເນັດ.

2.4 ການວິເຄາະຂໍ້ມູນ

ພາຍຫຼັງເກັບແບບສອບຖາມທັງໝົດຕາມຈຳນວນ, ກວດສອບຄວາມຖືກຕ້ອງຂອງ ແບບສອບຖາມແຕ່ລະຊຸດ. ຈາກນັ້ນ, ເອົາຂໍ້ມູນທັງໝົດໄປວິເຄາະໂດຍໂປຣແກຣມທາງສະຖິຕິສຳເລັດຮູບ (SPSS Version 22), ເພື່ອວິເຄາະຫາ ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ແລະ ຊອກຫາຄ່າສຳປະສິດຖົດຖອຍພະຫຸຄູນ (Multiple Regression Analysis) ເຊິ່ງໄດ້ມີການກຳນົດຄ່າລະດັບຄວາມສຳຄັນຄື: *sig ≤ 0.1 **sig ≤ 0.05 ***sig ≤0.01.

## 3. ຜົນໄດ້ຮັບ

ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງມີຄື:

ຜົນການສຶກສາ ໃນຕາຕະລາງທີ 1 ພົບວ່າ: ຕົວປ່ຽນອິດສະຫຼະທັງ 7 ຕົວ ເຊັ່ນ: ປັດໄຈດ້ານໂອກາດໃນອະນາຄົດ ($X_7$), ປັດໄຈດ້ານການເງິນ ($X_3$), ປັດໄຈດ້ານຫຼັກສູດ ($X_4$), ປັດໄຈດ້ານຄອບຄົວ ($X_5$), ປັດໄຈດ້ານສັງຄົມ ($X_6$), ປັດໄຈດ້ານສະພາບແວດລ້ອມ/ຄຸນນະພາບຂອງສະຖາບັນ ($X_2$), ປັດໄຈດ້ານເຫັດຜົນສ່ວນຕົວ ($X_1$) ມີຜົນຕໍ່ຕົວປ່ຽນຕາມ (ການຕັດສິນໃຈຂອງນັກສຶກສາທີ່ເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ) ຢູ່ໃນລະດັບສູງ (0.694) ແລະ ຕົວປ່ຽນອິດສະຫຼະທັງໝົດມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງໄດ້ ໂດຍຄິດເປັນສ່ວນຮ້ອຍແມ່ນ 48.10% ($R^2$ = 0.481). ສ່ວນທີ່ເຫລືອເກີດຈາກອິດທິພົນຂອງຕົວປ່ຽນອື່ນໆ ໂດຍຄິດເປັນສ່ວນຮ້ອຍແມ່ນ 51.90%.

ຜົນການສຶກສາໃນຕາຕະລາງທີ 2 ພົບວ່າ: ປັດໄຈດ້ານໂອກາດໃນອະນາຄົດ ($X_7$), ປັດໄຈດ້ານການເງິນ ($X_3$), ປັດໄຈດ້ານຫຼັກສູດ ($X_4$), ປັດໄຈດ້ານຄອບຄົວ ($X_5$), ປັດໄຈດ້ານສັງຄົມ ($X_6$), ປັດໄຈດ້ານສະພາບແວດລ້ອມ/ຄຸນນະພາບຂອງສະຖາບັນ ($X_2$), ປັດໄຈດ້ານເຫັດຜົນສ່ວນຕົວ ($X_1$) ສາມາດນຳໄປໃຊ້ອະທິບາຍການຜັນປ່ຽນຂອງຕົວປ່ຽນຕາມ (ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ) ໄດ້ ເນື່ອງຈາກວ່າ (Sig = 0.000 < $\alpha$ = 0.05) ສະແດງວ່າປະຕິເສດສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານຮອງ $H_1$ ຫຼື ສະແດງວ່າຕົວປ່ຽນອິດສະຫຼະຕ້ອງມີຢ່າງນ້ອຍ 1 ຕົວປ່ຽນ ຫລື ມີຕົວປ່ຽນໃດຕົວປ່ຽນໜຶ່ງທີ່ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລຄູຫຼວງພະບາງ.

ຜົນການສຶກສາໃນຕາຕະລາງທີ 3 ພົບວ່າ: ບັນດາຕົວປ່ຽນອິດສະຫຼະທີ່ມີຜົນຕໍ່ກັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ ມີຄື: ປັດໄຈດ້ານເຫັດຜົນສ່ວນຕົວ ($X_1$) ມີຄ່າ Sig = 0.000 ແລະ ປັດໄຈດ້ານໂອກາດໃນອະນາຄົດ ($X_7$) ມີຄ່າ Sig = 0.000 ເນື່ອງຈາກວ່າຜົນການທົດສອບຄ່າ Sig ມີຄ່ານ້ອຍກວ່າລະດັບຄວາມສຳຄັນທາງສະຖິຕິ $\alpha$ = 0.05 ໝາຍຄວາມວ່າ ປັດໄຈດ້ານເຫດຜົນສ່ວນຕົວ ແລະ ປັດໄຈດ້ານໂອກາດໃນອະນາຄົດ ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສະແດງວ່າປະຕິເສດສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານຮອງ $H_1$. ເຊິ່ງຕົວປ່ຽນອິດສະຫຼະທັງ 2 ຕົວຮ່ວມກັນອະທິບາຍການຜັນປ່ຽນຂອງການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ ຄິດເປັນສ່ວນຮ້ອຍ 48.10% ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ເມື່ອພິຈາລະນາຕົວປ່ຽນອິດສະຫຼະທີ່ມີອຳນາດໃນການພະຍາກອນການຜັນປ່ຽນຂອງການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງໄດ້ດີທີ່ສຸດແມ່ນ ປັດໄຈດ້ານເຫດຜົນສ່ວນຕົວ ($X_1$) ແລະ ປັດໄຈດ້ານໂອກາດໃນອະນາຄົດ ($X_7$) ເມື່ອນຳຕົວປ່ຽນທັງໝົດທີ່ຮ່ວມກັນອະທິບາຍພະຍາກອນຂອງການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ທີ່ວິທະຍາໄລຄູຫຼວງພະບາງມາຂຽນເປັນສົມຜົນການຖົດຖອຍພະຫຸຄູນໄດ້ດັ່ງນີ້:

ຈາກສູດ $Y = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \ldots\ldots + \beta_n X_n + \varepsilon$

ດັ່ງນັ້ນ, ຜູ້ສຶກສາໄດ້ນຳຄ່າສຳປະສິດຂອງຕົວພະຍາກອນມາຂຽນເປັນສົມຜົນຖົດຖອຍພະຫຸຄູນຂອງການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍນຳໃຊ້ຄະແນນມາດຕະຖານດັ່ງນີ້:

$Y = 1.494 + 0.384X_1 + 0.177X_7$

## 4. ວິພາກຜົນ

ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ ເມື່ອພິຈາລະນາເປັນລາຍດ້ານ ພົບວ່າມີ 2 ປັດໄຈ ທີ່ສົ່ງຜົນຕໍ່ການຕັດສິນໃຈຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.01: ປັດໄຈດ້ານເຫດຜົນສ່ວນຕົວ ($X_1$) ແລະ ປັດໄຈດ້ານໂອກາດໃນອະນາຄົດ ($X_7$) ເຊິ່ງປັດໄຈດ້ານເຫດຜົນສ່ວນຕົວ ເປັນປັດໄຈທີ່ນັກສຶກສາເລືອກມາເປັນປັດໄຈຫຼັກໃນການເລືອກເຂົ້າສຶກສາຕໍ່ ສິ່ງນີ້ອາດເປັນສາເຫດມາຈາກວ່າ ນັກສຶກສາມີແຮງຈູງໃຈຮັກໃນອາຊີບຄູ ເຊິ່ງມັນສອດຄ່ອງກັບຜົນການຄົ້ນຄວ້າຂອງ Chanthamanyvong et al. (2024) *ເວົ້າວ່າ ບຸກຄະລິກກະພາບກັບການຕັດສິນໃຈເຊິ່ງມີອົງປະກອບທີ່ສຳຄັນຄື ແຮງຈູງໃຈເຊິ່ງເປັນສ່ວນຊຸກຍູ້ຈິດໃຈ ໃຫ້ຢາກເຮັດສິ່ງໃດສິ່ງໜຶ່ງ, ການຢາກຮູ້ສິ່ງທີ່ຮອບຕົວ ແລະ ແນວໂນ້ມທີ່ຈະສະແດງພຶດຕິກຳຂອງແຕ່ລະບຸກຄົນ.* ນອກຈາກນີ້ ປັດໄຈສ່ວນຕົວຍັງຈະຊ່ວຍໃຫ້ຕົນເອງມີວິທີການສອນທີ່ທັນສະໄໝ ແລະ ມີປະສິດທິພາບຫຼາຍຂຶ້ນ ເຊິ່ງສອດຄ່ອງກັບແນວຄິດການສຶກສາຕໍ່ຂອງ ແກ້ວສົມບູນ (2012 : 2) *ໄດ້ກ່າວວ່າ ການສຶກສາຕໍ່ ແມ່ນ ການເສີມຄວາມກ້າວໜ້າທາງວິຊາການເພື່ອໃຊ້ເປັນປັດໄຈໃນການພັດທະນາຕົນເອງໃຫ້ມີຄວາມຮູ້, ຄວາມສາມາດ ແລະ ປະສົບການສູງຂຶ້ນ ເພື່ອໃຫ້ສາມາດດຳເນີນງານໄດ້ຢ່າງມີປະສິດທິພາບ ແລະ ຕິດພັນກັບການປ່ຽນແປງຂອງສັງຄົມລວມທັງຍັງສົ່ງຜົນດ້ານຄວາມກ້າວໜ້າໃນໜ້າທີ່ວຽກງານ* ແລະ ຍັງສອດຄ່ອງກັບທິດສະດີການສຶກສາຕໍ່ຂອງ ປະຈວບພອນ (2017: 6) *ກ່າວວ່າ ການສຶກສາຕໍ່ແມ່ນການສຶກສາໃນລະດັບສູງກວ່າຫຼືຕໍ່ເນື່ອງຈາກທີ່ຮຽນແລ້ວ ເພື່ອຕ້ອງການຫາຄວາມຮູ້ເພີ່ມເຕີມ, ຄວາມຖະໜັດ ແລະ ຄວາມມັກຂອງຕົນ ແລະ ເພື່ອໃຫ້ທັນກັບໂລກ ລວມທັງການພັດທະນາ ແລະ ຍົກລະດັບການສຶກສາຂອງຕົນໃຫ້ມີຄວາມຈະເລີນງອກງາມ* ແລະ ປັດໄຈດ້ານເຫດຜົນສ່ວນຕົວຍັງຈຳເປັນທີ່ຈະເຮັດໃຫ້ນັກສຶກສາຕັດສິນໃຈສຶກສາຕໍ່ ເພື່ອຕ້ອງການສ້າງອະນາຄົດທີ່ດີສຳລັບຕົນເອງ ເຊິ່ງສອດຄ່ອງກັບທິດສະດີປັດໄຈໃນການສຶກສາຕໍ່ຂອງ *ສຶກສາປັດໄຈທີ່ມີຜົນຕໍ່ການຕັດສິນໃຈເລືອກສຶກສາຕໍ່,* ສ່ວນປັດໄຈດ້ານໂອກາດໃນອະນາຄົດ ($X_7$) ກໍເປັນປັດໄຈທີ່ນັກສຶກສາເລືອກມາເປັນປັດໄຈຫຼັກໃນການເລືອກເຂົ້າສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ ສິ່ງນີ້ອາດເປັນສາເຫດມາຈາກວ່າ ນັກສຶກສາມີຄວາມຫວັງວ່າຫຼັງຈາກຮຽນຈົບຈະນຳ

ເອົາຄວາມຮູ້ໄປຖ່າຍທອດໃຫ້ແກ່ນັກຮຽນຂອງຕົນ, ການສຶກສາຕໍ່ຈະຊ່ວຍໃຫ້ມີຄວາມກ້າວໜ້າດ້ານອາຊີບ ແລະ ມີຄວາມໝັ້ນຄົງໃນການປະກອບອາຊີບ ເຊິ່ງສອດຄ່ອງກັບແນວຄິດຂອງ Becker (1993) ໄດ້ສະເໜີແນວຄິດວ່າ ການສຶກສາແມ່ນຮູບແບບໜຶ່ງຂອງການລົງທຶນໃນຕົນເອງ (Investment in oneself). ນັກສຶກສາຈະຕັດສິນໃຈເລືອກຮຽນໃນຫຼັກສູດ ຫຼື ສະຖາບັນທີ່ເຂົາເຈົ້າເຊື່ອໝັ້ນວ່າຈະຊ່ວຍເພີ່ມພູນທັກສະ ແລະ ຄວາມຮູ້ ເຊິ່ງຈະນຳໄປສູ່ການມີລາຍໄດ້ທີ່ສູງຂຶ້ນ ແລະ ມີໂອກາດໃນໜ້າທີ່ການງານທີ່ດີກວ່າເກົ່າໃນອະນາຄົດ. ສະນັ້ນ, ການທີ່ນັກສຶກສາເລືອກສຶກສາຕໍ່ທີ່ວິທະຍາໄລຄູ ແມ່ນຍ້ອນການຄາດຫວັງເຖິງຜົນຕອບແທນທາງເສດຖະກິດ ແລະ ຄວາມກ້າວໜ້າໃນສາຍອາຊີບຄູໃນໄລຍະຍາວ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ແພງຄຳສອນ (2025) ໄດ້ ພົບວ່າ: ປັດໄຈດ້ານການເງິນ, ປັດໄຈດ້ານສະຖາບັນການສຶກສາ, ປັດໄຈດ້ານບັນຍາກາດ ແລະ ສິ່ງແວດລ້ອມ, ປັດໄຈດ້ານການປະຊາສຳພັນ ແລະ ປັດໄຈດ້ານສັງຄົມ ມີຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງພູມີຜົນ (2024) ພົບວ່າ: ປັດໄຈດ້ານອາຍຸຂອງນັກຮຽນສາມັນ, ປັດໄຈດ້ານຫຼັກສູດທີ່ເປີດສອນແມ່ນເນັ້ນຄວາມຊ່ຽວຊານທາງດ້ານສາຂາວິຊາຊີບ, ວິທະຍາໄລມີ ຄູ-ອາຈານມີຊື່ສຽງເປັນທີ່ຍອມຮັບ, ວິທະຍາໄລມີອາຈານເກັ່ງ ມີຄວາມຮູ້, ຄວາມສາມາດ ແລະ ມີຄວາມຊ່ຽວຊານ, ປັດໄຈດ້ານຄອບຄົວຢາກໃຫ້ຮຽນໃນວິທະຍາໄລແຫ່ງນີ້, ປັດໄຈດ້ານຄ່າໃຊ້ຈ່າຍຄ່າລົງທະບຽນ, ຄ່າບໍລິການ ແລະ ຄ່າທຳນຽມ, ປັດໄຈດ້ານມີການປະຊາສຳພັນດ້ວຍແຜ່ນພັບ, ວາລະສານ, ໂພສເຕີ ແມ່ນມີຜົນຕໍ່ກັບການຕັດສິນໃຈເລືອກເຂົ້າຮຽນຂອງນັກຮຽນເພີ່ມຂຶ້ນດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ສ່ວນປັດໄຈດ້ານເພດຂອງນັກຮຽນ, ປັດໄຈດ້ານລາຍໄດ້ຂອງຄອບຄົວ ແລະ ປັດໄຈດ້ານມີສິ່ງອຳນວຍຄວາມສະດວກເປັນຕົ້ນແມ່ນ ຫໍພັກ ແລະ ສະໜາມກິລາ ແມ່ນມີຜົນຕໍ່ກັບການຕັດສິນໃຈເລືອກເຂົ້າຮຽນຂອງນັກຮຽນຫຼຸດລົງດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05

## 5. ສະຫຼຸບ

ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງພົບວ່າ: ປັດໄຈອິດສະຫຼະທັງ 7 ດ້ານສາມາດຮ່ວມກັນພະຍາກອນການຕັດສິນໃຈເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ ໄດ້ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໂດຍມີຄ່າສຳປະສິດຖົດຖອຍພະຫຸຄູນເທົ່າກັບ 0.694 ແລະ ສາມາດຮ່ວມກັນອະທິບາຍການຜັນປ່ຽນຂອງການຕັດສິນໃຈໄດ້ຮ້ອຍລະ 48.10%.

ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ມີ 2 ປັດໄຈ ທີ່ສົ່ງຜົນຕໍ່ການຕັດສິນໃຈຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຄື: ປັດໄຈດ້ານເຫດຜົນສ່ວນຕົວ ($X_1$) ແລະ ປັດໄຈດ້ານໂອກາດໃນອະນາຄົດ ($X_7$) ເຊິ່ງມີອຳນາດໃນການພະຍາກອນສູງທີ່ສຸດ. ຜົນການທົດສອບສົມມຸດຕິຖານພົບວ່າ ທັງສອງປັດໄຈນີ້ສົ່ງຜົນໃນທາງບວກຕໍ່ການຕັດສິນໃຈຢ່າງມີຄວາມສຳຄັນທາງສະຖິຕິ, ໃນຂະນະທີ່ປັດໄຈດ້ານສະພາບແວດລ້ອມ/ຄຸນນະພາບຂອງສະຖາບັນ ($X_2$), ປັດໄຈດ້ານການເງິນ ($X_3$), ປັດໄຈດ້ານຫຼັກສູດ ($X_4$), ປັດໄຈດ້ານຄອບຄົວ ($X_5$), ປັດໄຈດ້ານສັງຄົມ ($X_6$) ແມ່ນບໍ່ສົ່ງຜົນຕໍ່ການຕັດສິນໃຈຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ສຶກສາ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2016). *ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 (2016-2020).*

ກົມການສຶກສາຊັ້ນສູງ. (2020). *ຂໍ້ຕົກລົງວ່າດ້ວຍມາດຕະຖານຫຼັກສູດແຫ່ງຊາດ ລະດັບປະລິນຍາໂທ (ສະບັບປັບປຸງ), ສະບັບເລກທີ 4487/ສສກ, ລົງວັນທີ 02 ຕຸລາ 2020.*

ປະຈວບພອນ, ສ. (2017). *ການສຶກສາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກຫຼານເຂົ້າສຶກສາຕໍ່ລະດັບຊັ້ນມັດທະຍົມສຶກສາປີທີ 4 ໂຮງຮຽນ ບາງບົວທອງ.* (ປະລິນຍາຕີ). ມະຫາວິທະຍາໄລລາດຊະພັດບ້ານສົມເດັດເຈົ້າພະຍາ.

ພູມີຜົນ, ຊ. (2024). *ປັດໄຈທີ່ມີຜົນຕໍ່ການເລືອກເຂົ້າຮຽນທີ່ວິທະຍາໄລ ເຕັກນິກວິຊາຊີບ ແບບປະສົມແຂວງອຸດົມໄຊ-ຂອງນັກຮຽນສາມັນພາຍໃນແຂວງອຸດົມໄຊ.* (ວິທະຍານິພົນປະລິນຍາໂທ). ມະຫາວິທະຍາໄລສຸພານຸວົງ.

ວົງລັດຕະນະ, ຊ. (2001). *ການວິໄຈເພື່ອການຮຽນຮູ້.* ທົບພັບລິເຄຊັ່ນ.

ແກ້ວສົມບູນ, ວ. (2012). *ເຫດຈູງໃຈໃນການສຶກສາຕໍ່ລະດັບປະລິຍາຕີ.*

ແພງຄຳສອນ, ພ. (2025). *ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ.* (ວິທະຍານິພົນປະລິນຍາໂທ). ມະຫາວິທະຍາໄລສຸພານຸວົງ.

Arnolds, C., Smith, E., & Kruger, J. (2009). Assessing human resource management and organisational improvement best practices in the Nelson Mandela Metropole. *South African Journal of Labour Relations, 33*(1), 7–27.

Becker, G. S. (1993). *Human capital: A theoretical and empirical analysis, with special reference to education* (3rd ed.). University of Chicago Press.

Chanthamanyvong, K., Duangvilaykeo, T., & Saibounbhang, S. (2024). Factors Affecting Students' Decisions in Choosing to Study for a Master's Degree of Souphanouvong University: https://doi.org/10.69692/SUJMRD100465. *Souphanouvong University Journal Multidisciplinary Research and Development, 10*(4), 65–73. Retrieved from http://www.su-journal.com/index.php/su/article/view/729

Phommalangsy, P., Phonesay, L., Saiyasone, P., Phimmasone, X., & Luangsena, P. (2024). Factors affecting the quality of mathematics teaching and learning of high school students in the 4th grade in Savannakhet province: *Souphanouvong University Journal Multidisciplinary Research and Development, 10*(1), 91–98. Retrieved from https://www.su-journal.com/index.php/su/article/view/472 https://doi.org/10.69692/SUJMRD100191.

Sangsee, S. (2005). *Education and lifelong learning process.*

Srisa-ard, B. (2002). *Research methodology in education.* Bangkok: Suweeriyasan.

Thongchuea, S., & Tummaek, W. (2017). *Human resource development and organizational advancement.*

Taveerat, P. (1997). *Measurement and evaluation in education.* Bangkok: Srinakharinwirot University.

Yamane, T. (1967). *Statistics, An Introductory Analysis* (2nd ed.). Harper and Row.

**ຕາຕະລາງທີ 1 ສະແດງເຖິງແບບຈຳລອງທີ່ໄດ້ຈາກການວິເຄາະການຖົດຖອຍພະຫຸຄູນ ຫຼື ການພະຍາກອນ**

**Model Summary**

| Model | R | R Square | Adjusted R Square | Std. Error of the Estimate |
|---|---|---|---|---|
| 1 | 0.694[a] | 0.481 | 0.468 | 0.23050 |

a. Predictors: (Constant), ປັດໄຈດ້ານໂອກາດໃນອະນາຄົດ ($X_7$), ປັດໄຈດ້ານການເງິນ ($X_3$), ປັດໄຈດ້ານຫຼັກສູດ ($X_4$), ປັດໄຈດ້ານຄອບຄົວ ($X_5$), ປັດໄຈດ້ານສັງຄົມ ($X_6$), ປັດໄຈດ້ານສະພາບແວດລ້ອມ/ຄຸນນະພາບຂອງສະຖາບັນ ($X_2$), ປັດໄຈດ້ານເຫັດຜົນສ່ວນຕົວ ($X_1$).

**ຕາຕະລາງທີ 2** ສະແດງຜົນການວິເຄາະການຜັນປ່ຽນຂອງການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ

**ANOVA[a]**

| | Model | Sum of Squares | Df | Mean Square | F | Sig. |
|---|---|---|---|---|---|---|
| 1 | Regression | 13.890 | 7 | 1.984 | 37.347 | 0.000[b] |
| | Residual | 14.983 | 282 | 0.053 | | |
| | Total | 28.873 | 289 | | | |

a. Dependent Variable: ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ

b. ຕົວພະຍາກອນ: (ຄ່າຄົງທີ່), ($X_7$), ($X_3$), ($X_4$), ($X_5$), ($X_6$), ($X_2$) ແລະ ($X_1$).

**ຕາຕະລາງທີ 3:** ສະແດງຜົນການວິເຄາະຄ່າສຳປະສິດຖົດຖອຍພະຫຸຄູນຂອງປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ທີ່ວິທະຍາໄລຄູຫຼວງພະບາງ

**Coefficients[a]**

| Model | Unstandardized Coefficients | | Standardized Coefficients | t | Sig. |
|---|---|---|---|---|---|
| | b | Std. Error | Beta | | |
| (Constant) ຄ່າຄົງທີ່ | 1.494 | 0.411 | | 3.633 | 0.000 |
| ປັດໄຈດ້ານເຫັດຜົນສ່ວນຕົວ ($X_1$) | 0.384 | 0.042 | 0.555 | 9.150 | 0.000 |
| ປັດໄຈດ້ານສະພາບແວດລ້ອມ/ຄຸນນະພາບຂອງສະຖາບັນ ($X_2$) | -0.020 | 0.055 | -0.020 | -0.367 | 0.714 |
| ປັດໄຈດ້ານການເງິນ ($X_3$) | -0.028 | 0.042 | -0.029 | -0.665 | 0.507 |
| ປັດໄຈດ້ານຫຼັກສູດ ($X_4$) | 0.100 | 0.055 | 0.079 | 1.811 | 0.071 |
| ປັດໄຈດ້ານຄອບຄົວ ($X_5$) | 0.068 | 0.043 | 0.068 | 1.570 | 0.118 |
| ປັດໄຈດ້ານສັງຄົມ ($X_6$) | 0.007 | 0.037 | 0.009 | 0.193 | 0.847 |
| ປັດໄຈດ້ານໂອກາດໃນອະນາຄົດ ($X_7$) | 0.177 | 0.046 | 0.210 | 3.848 | 0.000 |

R= 0.769, $R^2$= 0.481, $R^2 adj$= 0.468, F Overall= 37.347, SEE= 0.23050, Sig= 0.000***

a. Dependent Variable: ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ ທີ່ວິທະຍາໄລຄູຫຼວງພະບາງ

***ລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.01

ns: Non signification ບໍ່ມີລະດັບຄວາມສຳຄັນທາງສະຖິຕິ